**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນາຖາວອນ

ແຂວງຊຽງຂວາງ

ຫ້ອງການປົກຄອງແຂວງ

ເລກທີ....05......./ຈຂ.ຊຂ

ລົງວັນທີ.21../..02../2017....

# ຄຳສັ່ງແນະນຳ

## ຂອງທ່ານເຈົ້າແຂວງວ່າດ້ວຍການຄຸ້ມຄອງຜົນຂອງການກວດກາການຂຸດຄົ້ນໄມ້, ທ້ອນໂຮມໄມ້ ແລະ ເຄື່ອນຍ້າຍໄມ້ຢູ່ແຂວງຊຽງຂວາງ

ເຖິງ : ຫົວໜ້າ ພະແນການອ້ອມຂ້າງແຂວງ,ບັນດາເຈົ້າເມືອງ 7 ເມືອງແລະບັນດາຫົວໜ່ວຍທຸລະກິດໄມ້

ເລື່ອງ : ໃຫ້ເອົາໃຈໃສ່ຄຸ້ມຄອງປົກປັກຮັກສາໄມ້ທ່ອນທີ່ຍັງຄ້າງຢູ່ສະໜາມ II.

- ອີງຕາມກົດໝາຍປ່າໄມ້ສະບັບເລກທີ່ 06/ສພຊລົງວັນທີ່ 24 ທັນວາ 2007
- ອີງຕາມຂໍ້ຕົກລົງຂອງກະຊວງກະສິກຳແລະປ່າໄມ້ສະບັບເລກທີ່ 0199/ກປ, ລົງວັນທີ່ 9/2/2017
- ອີງໃສ່ສະພາບດິນຟ້າອາກາດໃນລະດູແລ້ງອາດຈະເກີດອັກຄີໄຟ

ເພື່ອເຮັດໃຫ້ການຄຸ້ມຄອງແລະປົກປັກຮັກສາໄມ້ທ່ອນສະໜາມ IIບໍ່ໃຫ້ຖືກທຳລາຍ,ຕົກເຮ່ຍເສຍຫາຍຫຼືມີການລັກລອບເຄື່ອນຍ້າຍ ຮອງເຈົ້າແຂວງ, ຮອງຫົວໜ້າຄະນະສະເພາະກິດ ອອກຄຳສັ່ງແນະນຳ ດັ່ງນີ້:

1. ໃຫ້ເຈົ້າເມືອງ ຈັດຕັ້ງການໂຄສະນາ ເຜີຍແຜ່ ສຶກສາອົບຮົມ ຜູ້ປະກອບການ,ປະຊາຊົນໃຫ້ເຂົ້າຮ່ວມໃນການປົກປັກຮັກສາຄຸ້ມຄອງໄມ້ໃນສະໜາມ II ບໍ່ໃຫ້ເກີດອັກຄີໄຟ,ຕົກເຮ່ຍເສຍຫາຍ ຈົນກວ່າມີຄຳສັ່ງຂອງຂັ້ນເທິງໃຫ້ເຄື່ອນຍ້າຍ.
2. ໃຫ້ເຈົ້າເມືອງ ແຕ່ງຕັ້ງ ຄະນະຮັບຜິດຊອບ ຄຸ້ມຄອງປົກປັກຮັກສາໄມ້ ສະໜາມ II ຂັ້ນເມືອງ, ຂັ້ນບ້ານ ;ຄະນະຮັບຜິດຊອບຄຸ້ມຄອງປົກປັກຮັກສາໄມ້ ສະໜາມ II ຂັ້ນເມືອງ ມີໜ້າທີ່ ແນະນຳ ຜູ້ປະກອບການ, ເຈົ້າຂອງໄມ້ ເອົາໃຈໃສ່ ສ້າງແລວກັນໄຟ, ອະນາໄມສະໜາມໄມ້ ຈັດຕັ້ງການເວນຍາມ ບໍ່ໃຫ້ໄມ້ຖືກທຳລາຍ ແລະຕົກເຮ່ຍເສຍຫາຍ, ຄະນະຮັບຜິດຊອບຄຸ້ມຄອງປົກປັກຮັກສາໄມ້ ສະໜາມ II ຂັ້ນບ້ານ ມີໜ້າທີ່ຕິດຕາມການເຄື່ອນໄຫວຂອງບຸກຄົນບໍ່ດີ ທີ່ຫວັງທຳລາຍ ແລະ ລັກລອບໄມ້ .
3. ໃຫ້ຜູ້ປະກອບການ,ເຈົ້າຂອງໄມ້ ເອົາໃຈໃສ່ອະນາໄມ, ສ້າງແລວກັນໄຟ, ຈັດຕັ້ງການປ້ອງກັນເວນຍາມ ສະໜາມໄມ້ບໍ່ໃຫ້ຖືກທຳລາຍ ແລະ ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ໃນການຄຸ້ມຄອງປົກປັກຮັກສາ, ກວດກາຕິດຕາມການເຄື່ອນຍ້າຍໄມ້.
4. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແນະນຳ ໃຫ້ບໍລິສັດຜູ້ປະກອບການ,ເຈົ້າຂອງໄມ້ ໃຫ້ປະຕິບັດຕາມມາດຖານເຕັກນິກໃນການສ້າງແລວປ້ອງກັນໄຟ,ການເກັບຮັກສາໄມ້ທ່ອນ ເພື່ອບໍ່ໃຫ້ຖືກທຳລາຍ ແລະ ຈັດຕັ້ງການປ້ອງກັນເວນຍາມໃຫ້ດີ

5. ໃຫ້ພະແນກອຸດສາຫະກຳແລະການຄ້າ ແຂວງ ແນະນຳ ຫ້ອງການອຸດສາຫະກຳແລະການຄ້າເມືອງ ກວດກາ ບັນຊີ ,ສົມທຽບ ໃສ່ໄມ້ຕົວຈິງ ແລະ ຮັບຮອງເອົາ ບັນຊີໄມ້ໃນສະໜາມ II ພ້ອມທັງສົມທົບກັບພາກສ່ວນ ກ່ຽວຂ້ອງ ຕິດຕາມການເຄື່ອນຍ້າຍໄມ້ ໃນຂອບເຂດຕົນຮັບຜິດຊອບ.
6. ໃຫ້ກອງບັນຊາການ ປ ກ ສ ແຂວງ ຊີ້ນຳ ກອງບັນຊາການ ປ ກ ສ ເມືອງ ໃຫ້ເອົາໃຈໃສ່ຕິດຕາມ ການເຄື່ອນໄຫວ ຂອງຄົນບໍ່ດີທີ່ຫວັງທຳລາຍ ແລະ ລັກລອບໄມ້ໃນສະໜາມ II ໃນກໍລະນີມີການລັກລອບໄມ້ ແມ່ນໃຫ້ສົມທົບກັບ ຫ້ອງການກະສິກຳແລະປ່າໄມ້ເມືອງ ດຳເນີນການຊອກຫາຜູ້ກະທຳຜິດມາດຳເນີນຄະດີ ຕາມລະບຽບກົດໝາຍ.
7. ກ່ອນຈະມີການເຄື່ອນຍ້າຍໄມ້ແຕ່ລະຄັ້ງຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດກ່ອນຈຶ່ງສາມາດເຄື່ອນ ຍ້າຍໄດ້, ຖ້າມີການຝ່າຝືນຈະຖືກປະຕິບັດວິໄນ, ລະບຽບກົດໝາຍ ຢ່າງເຂັ້ມງວດ.
8. ຫ້າມບຸກຄົນ,ນິຕິບຸກຄົນ,ປະຊາຊົນຈູດທຳລາຍ,ລັກລອບເຄື່ອນຍ້າຍໄມ້ທີ່ຈະສ້າງຄວາມເສຍຫາຍໃຫ້ແກ່ໄມ້ໃນ ສະໜາມ IIຢ່າງເດັດຂາດ ຖ້າມີການລະເມີດ ຈະໄດ້ມີການດຳເນີນຄະດີ ແລະ ລົງໂທດຕາມລະບຽບກົດໝາຍ.
9. ໃຫ້ພະແນກກວດກາລັດແຂວງ ຊຸກຍູ້ ຕິດຕາມ ການປະຕິບັດໜ້າທີ່, ພາລະບົດບາດຂອງ ພາກສ່ວນກ່ຽວຂ້ອງ ໃຫ້ໄດ້ຮັບຜົນດີ.

ດັ່ງນັ້ນ, ຈຶ່ງໄດ້ອອກຄຳສັ່ງແນະນຳສະບັບນີ້ແຈ້ງໃຫ້ທຸກພະແນກການທີ່ກ່ຽວຂ້ອງ, ເຈົ້າເມືອງທຸກໆເມືອງ, ຕະຫຼອດຮອດນັກທຸລະກິດ ແລະ ພໍ່ແມ່ປະຊາຊົນ ຈົ່ງໄດ້ໃຫ້ຄວາມຮ່ວມມື ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດໃຫ້ເຂັ້ມງວດ.

**ຮອງເຈົ້າແຂວງ,ແຂວງຊຽງຂວາງ**
**(ຮອງຫົວໜ້າຄະນະສະເພາະກິດ )**

ບ່ອນນຳສົ່ງ:

| | |
|---|---|
| - ທ່ານ ເຈົ້າແຂວງ,ຮອງເຈົ້າແຂວງ | 01 ສະບັບ (ເພື່ອລາຍງານ) |
| - ຄະນະປະຈຳ ພັກແຂວງ ທ່ານລະ | 01 ສະບັບ( ເພື່ອລາຍງານ) |
| - ຫ້ອງວ່າການປົກຄອງແຂວງ | 01 ສະບັບ |
| - ເຈົ້າເມືອງ 7 ເມືອງ ເມືອງລະ | 01 ສະບັບ |
| - ພະແນກການທີ່ກ່ຽວຂ້ອງ | 01 ສະບັບ |
| - ສຳເນົາ | 01 ສະບັບ |

ບົວສອນ ສີນວນທອງ